ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

2204----

ກະຊວງສຶກສາທິການ ແລະ ກິລາ ເລກທີ /ສສກ

ນະຄອນຫຼວງວຽງຈັນ, ວັນທີ 27 ສິງຫາ 2024

## ຄຳແນະນຳ

ເຖິງ: - ທ່ານ ຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ
- ທ່ານ ຫົວໜ້າຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນ
- ຜູ້ອຳນວຍການ, ຄູສອນ, ຜູ້ດູແລເດັກ ແລະ ພະນັກງານບໍລິຫານ ຂອງໂຮງລ້ຽງເດັກ ໂຮງຮຽນອະນຸບານ ແລະ ໂຮງຮຽນປະຖົມທີ່ຄຸ້ມຄອງສະຖານການສຶກສາກ່ອນໄວຮຽນ ທັງພາກລັດ ແລະ ເອກະຊົນ
- ບັນດາທ່ານທີ່ມີສ່ວນກ່ຽວຂ້ອງຈັດຕັ້ງປະຕິບັດການສຶກສາກ່ອນໄວຮຽນ.

ເລື່ອງ: ການກະກຽມເປີດສົກຮຽນ 2024-2025 ສຳລັບຂັ້ນການສຶກສາກ່ອນໄວຮຽນ

- ອີງຕາມ ມະຕິສະພາແຫ່ງຊາດ ເລກທີ 60/ສພຊ ລົງວັນທີ 08 ກໍລະກົດ 2022 ວ່າດ້ວຍການຮັບຮອງເອົາບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດ ຄາດໝາຍຂະແໜງການສຶກສາ ແລະ ກິລາ, ການປັບປຸງຄຸນນະພາບການຮຽນ-ການສອນ ທຸກຂັ້ນທຸກສາຍ ໃນໄລຍະໃໝ່ ແລະ ການຄຸ້ມຄອງວຽກງານກິລາ-ກາຍະກຳ;
- ອີງຕາມ ກອງປະຊຸມຜູ້ບໍລິຫານການສຶກສາປະຈຳສົກຮຽນສົກຮຽນ 2023-2024 ແລະ ແຜນວຽກປະຈຳສົກຮຽນ 2024-2025 ຄັ້ງວັນທີ 09 ສິງຫາ 2024.

ລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ ອອກຄຳແນະນຳ:

ເພື່ອເຮັດໃຫ້ການເປີດສົກຮຽນ 2024-2025 ຂອງສະຖານການສຶກສາກ່ອນໄວຮຽນໃນຂອບເຂດທົ່ວປະເທດ ມີຄວາມຟົດຟື້ນ, ຮັບປະກັນຄວາມປອດໄພ ແລະ ຄຸນນະພາບໃນການເບິ່ງແຍງ, ລ້ຽງດູ ແລະ ການຈັດການ-ຮຽນການສອນ ສຳລັບການສຶກສາກ່ອນໄວຮຽນ ຈຶ່ງມີຄຳແນະນຳ ພະແນກສຶກສາທິການ ແລະ ກິລາ ແຂວງ/ນະຄອນຫຼວງ, ຫ້ອງການສຶກສາທິການ ແລະ ກິລາ ເມືອງ/ນະຄອນ, ສະຖານການສຶກສາກ່ອນໄວຮຽນ ທັງພາກລັດ ແລະ ເອກະຊົນ ໃນການກະກຽມກ່ອນເປີດສົກຮຽນ 2024-2025 ເພື່ອສ້າງບັນຍາກາດການເປີດສົກຮຽນໃໝ່ ສຳລັບການສຶກສາກ່ອນໄວຮຽນ, ມີລາຍລະອຽດລຸ່ມນີ້:

1. ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນ, ສະມາຄົມການສຶກສາພາກເອກະຊົນ ເປັນເຈົ້າການສ້າງແຜນປະຕິບັດງານການສຶກສາກ່ອນໄວຮຽນ ເພື່ອໃຫ້ບັນລຸຄາດໝາຍຕົວຊີ້ບອກທີ່ກຳນົດໄວ້ ໃນສົກຮຽນ 2024-2025 ໂດຍສົມທົບກັບຂະແໜງການ/ໜ່ວຍງານທີ່ກ່ຽວຂ້ອງ ແລະ ຄູ່ຮ່ວມພັດທະນາ ທີ່ສະໜັບສະໜູນວຽກງານການສຶກສາກ່ອນໄວຮຽນ ພາຍໃນແຂວງ ແລະ ເມືອງ;
2. ໃຫ້ຫ້ອງການສຶກສາທິການ ແລະ ກິລາ ເມືອງ/ນະຄອນ ຈັດກອງປະຊຸມຖອດຖອນບົດຮຽນກ່ຽວກັບວຽກງານການສຶກສາກ່ອນໄວຮຽນ ປະຈຳສົກຮຽນ 2023-2024 ແລະ ວາງແຜນປະຈຳສົກຮຽນ 2024-2025 ຮ່ວມກັບສະຖານການສຶກສາກ່ອນໄວຮຽນ ທັງພາກລັດ ແລະ ເອກະຊົນ;

ສະແກນດ້ວຍ CamScanner

3. ຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນ ຊີ້ນຳ, ກວດກາ, ຕິດຕາມ ການກະກຽມຄວາມພ້ອມໃນການເປີດສົກຮຽນ 2024-2025 ຂອງສະຖານການສຶກສາກ່ອນໄວຮຽນ;
4. ໃຫ້ສະຖານການສຶກສາກ່ອນໄວຮຽນ ທຸກແຫ່ງ ຈັດພິທີເປີດສົກຮຽນ 2024-2025 ໃນວັນທີ 02 ກັນຍາ 2024 ໃນຂອບເຂດທົ່ວປະເທດຢ່າງຟົດຟື້ນ;
5. ສ້າງ ແລະ ປັບປຸງສະພາບແວດລ້ອມທີ່ເອື້ອອຳນວຍ ແລະ ຖືກສຸຂະອະນາໄມຂອງສະຖານການສຶກສາກ່ອນໄວຮຽນ ເພື່ອສົ່ງເສີມການເບິ່ງແຍງ, ລ້ຽງດູ ແລະ ການຈັດການຮຽນການສອນໃຫ້ເດັກກ່ອນໄວຮຽນ ດ້ວຍການສ້ອມແປງອາຄານສະຖານທີ່, ຫ້ອງຮຽນ, ໂຕະ, ຕັ່ງ, ຫ້ອງນ້ຳ ແລະ ວິດຖ່າຍ, ຮາງ/ອ່າງລ້າງມື, ບ່ອນລ້າງມື; ອະນາໄມບໍລິເວນເດີ່ນໂຮງຮຽນ, ເຄື່ອງໃຊ້, ເຄື່ອງຫຼິ້ນໃນຫ້ອງ, ນອກຫ້ອງຮຽນ ແລະ ກຳຈັດແຫຼ່ງເພາະພັນຍຸງລາຍໃນຂອບເຂດບໍລິເວນສະຖານການສຶກສາ; ແລະ ປະດັບປະດາໂຮງຮຽນ, ຫ້ອງຮຽນ ໃຫ້ສວຍງາມ ແລະ ສະອາດງາມຕາ ເພື່ອດຶງດູດຄວາມສົນໃຈຂອງເດັກນ້ອຍ ແລະ ພໍ່ແມ່/ຜູ້ປົກຄອງ ໃນການມາເຂົ້າຮຽນ;
6. ໃຫ້ສະຖານການສຶກສາກ່ອນໄວຮຽນ ກະກຽມການຈັດຕັ້ງປະຕິບັດການຮຽນການສອນໃນແຕ່ລະຊັ້ນຮຽນ ແລະ ຂັ້ນຮຽນ ຂອງສະຖານການສຶກສາກ່ອນໄວຮຽນ ທັງພາກລັດ ແລະ ເອກະຊົນ ຊຶ່ງປະກອບດ້ວຍ ການສັບຊ້ອນຄູໃຫ້ສອດຄ່ອງກັບແຕ່ລະຂັ້ນຮຽນ, ສັບຊ້ອນນັກຮຽນເຂົ້າຮຽນຖືກຕາມເກນອາຍຸໃນແຕ່ລະຂັ້ນຮຽນ, ຝຶກອົບຮົມຄູສອນ ແລະ ຜູ້ດູແລເດັກ ໃຫ້ສາມາດນຳໃຊ້ຫຼັກສູດ, ຄູ່ມືການຈັດການຮຽນການສອນໃນແຕ່ລະຂັ້ນຮຽນ ຕາມເງື່ອນໄຂຕ່າງໆ ຂອງແຕ່ລະຮູບແບບການຈັດການຮຽນການສອນ ທີ່ກຳນົດໃນປຶ້ມຫຼັກການຄຸ້ມຄອງການສຶກສາກ່ອນໄວຮຽນ. ພ້ອມທັງກະກຽມ ສື່/ອຸປະກອນ, ເຄື່ອງຫຼິ້ນ, ເຄື່ອງໃຊ້ສຳລັບເດັກ ແລະ ຮັບການລົງທະບຽນເຂົ້າຮຽນຂອງນັກຮຽນ;
7. ຜູ້ອຳນວຍການ, ຄູສອນ ແລະ ຜູ້ດູແລເດັກ ກວດກາຄືນ ແລະ ກະກຽມປຶ້ມຄູ່ມືຄູ, ແຜນການລ້ຽງດູສຶກສາອົບຮົມເດັກ ອາຍຸ 3-36 ເດືອນ, ແຜນຈັດປະສົບການຊັ້ນອະນຸບານສຶກສາ, ຫ້ອງກຽມປະຖົມ, ກຸ່ມຮຽນຜ່ານການຫຼິ້ນ, ກຸ່ມພັດທະນາເດັກໃນຊຸມຊົນ (ເດັກອາຍຸ 3-4 ປີ), ການສອນຄວບອາຍຸ (ເດັກອາຍຸ 3-5 ປີ) ເພື່ອກຽມຄວາມພ້ອມໃຫ້ຄູ ແລະ ຜູ້ດູແລເດັກໃນການນຳໃຊ້ເຂົ້າໃນການເບິ່ງແຍງ, ລ້ຽງດູ ແລະ ການຈັດການຮຽນການ;
8. ຜູ້ອຳນວຍການໂຮງຮຽນ ຊີ້ນຳ, ນຳພາ ຄູສອນ ສ້າງແຜນການສອນ ແລະ ຜະລິດອຸປະກອນການຮຽນການສອນປະຈຳສົກຮຽນ 2024-2025 ສຳລັບແຕ່ລະຂັ້ນຮຽນ ໃນຊັ້ນການສຶກສາກ່ອນໄວຮຽນ;
9. ປະສານສົມທົບ ກັບອຳນາດການປົກຄອງ, ຄະນະພັດທະນາການສຶກສາຂັ້ນບ້ານ, ພໍ່ແມ່/ຜູ້ປົກຄອງ ໃຫ້ເອົາລູກຫຼານຂອງຕົນທີ່ມີເກນອາຍຸເຂົ້າມາຮຽນ, ປະກອບສ່ວນໃນການສ້ອມແປງ ແລະ ອະນາໄມອາຄານ, ສະຖານທີ່ ທັງໃນ ແລະ ນອກຫ້ອງຮຽນ.

ມອບໃຫ້ຜູ້ບໍລິຫານການສຶກສາ ແລະ ກິລາ ຂັ້ນແຂວງ/ນະຄອນຫຼວງ, ຂັ້ນເມືອງ/ນະຄອນ, ຂັ້ນໂຮງຮຽນຈັດຕັ້ງປະຕິບັດ, ກວດກາ, ຕິດຕາມ, ຊຸກຍູ້ ແລະ ສະຫຼຸບລາຍງານໃຫ້ຂັ້ນເທິງຖັດໄປຂອງຕົນຮັບຊາບ.

ດັ່ງນັ້ນ, ຈຶ່ງແນະນຳມາຍັງທ່ານເພື່ອຮັບຊາບ ແລະ ຈັດຕັ້ງປະຕິບັດຢ່າງທົ່ວເຖິງດ້ວຍ.

ເຊັນແທນ ລັດຖະມົນຕີ

ກະຊວງສຶກສາທິການ ແລະ ກິລາ

ລັດຖະມົນຕີ

ປອ. ສຳລານ ພັນຄະວົງ

<u>ບ່ອນສົ່ງ</u>

- ຫ້ອງການກະຊວງສຶກສາທິການ ແລະ ກິລາ 1 ສະບັບ
- ພະແນກສຶກສາທິການ ແລະ ກິລາແຂວງ ແລະ ນະຄອນຫຼວງ, ແຂວງລະ 1 ສະບັບ
- ເກັບມ້ຽນ 5 ສະບັບ

ສະແກນດ້ວຍ CamScanner